ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງລະບົບຊຳລະສະສາງ

ເລກທີ 1280/ຄລຊ

ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2019

# ແຈ້ງການ

**ເຖິງ:** - ຮ້ານຄ້າທີ່ຮັບຊຳລະຄ່າສິນຄ້າ ແລະ ຄ່າບໍລິການຜ່ານເຄື່ອງພີໂອເອສ;

- ມວນຊົນທົ່ວໄປທີ່ໃຊ້ບັດຊຳລະຄ່າສິນຄ້າ ແລະ ຄ່າບໍລິການຜ່ານເຄື່ອງພີໂອເອສ.

**ເລື່ອງ:** ການນຳໃຊ້ເຄື່ອງພີໂອເອສ (Point of Sale: POS) ໃນການຮັບຊຳລະຄ່າສິນຄ້າ ແລະ ຄ່າບໍລິການ ໃນ ສປປ ລາວ.

- ອີງຕາມກົດໝາຍວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມແຈ້ງການຂອງກົມຄຸ້ມຄອງລະບົບຊຳລະສະສາງສະບັບເລກທີ 1279/ຄລຊ, ລົງວັນທີ 12 ພະຈິກ 2019.

ກົມຄຸ້ມຄອງລະບົບຊຳລະສະສາງ (ຄລຊ), ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງ ຮ້ານຄ້າ (Merchants ເຊັ່ນ ໂຮງແຮມ, ຮ້ານອາຫານ, ຮ້ານຂາຍເຄື່ອງ ແລະ ອື່ນໆ) ທີ່ຮັບຊຳລະຄ່າສິນຄ້າ ແລະ ຄ່າບໍລິການຜ່ານເຄື່ອງພີໂອເອສ ແລະ ມວນຊົນທົ່ວໄປໃນຂອບເຂດທົ່ວປະເທດ ຊາບວ່າ: ເພື່ອຈັດຕັ້ງປະຕິບັດຕາມແນວທາງຂອງພັກ ແລະ ລັດຖະບານ ສປປ ລາວ ໃນການສົ່ງເສີມການນຳໃຊ້ເງິນກີບ, ຫຼຸດຜ່ອນການນຳໃຊ້ເງິນສົດ ແລະ ຄຸ້ມຄອງການນຳໃຊ້ເງິນຕາຕ່າງປະເທດແບບຊະຊາຍພາຍໃນປະເທດ, ກົມຄຸ້ມຄອງລະບົບຊຳລະສະສາງ ຈຶ່ງຂໍແຈ້ງມາຍັງທ່ານ ດັ່ງລາຍລະອຽດລຸ່ມນີ້:

1. ຮ້ານຄ້າທີ່ຮັບຊຳລະຄ່າສິນຄ້າ ແລະ ຄ່າບໍລິການຜ່ານເຄື່ອງພີໂອເອສ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດການນຳໃຊ້ເຄື່ອງພີໂອເອສ ໃນການຮັບຊຳລະຄ່າສິນຄ້າ ແລະ ຄ່າບໍລິການໃນ ສປປ ລາວ ຕ້ອງຮັບຊຳລະເປັນສະກຸນເງິນກີບເທົ່ານັ້ນຈາກ ທະນາຄານທີ່ໃຫ້ບໍລິການຮັບຊຳລະ (Acquirer) ບໍ່ວ່າລູກຄ້າ ຫຼື ມວນຊົນທົ່ວໄປທີ່ໃຊ້ບັດຊຳລະຄ່າສິນຄ້າ ແລະ ຄ່າບໍລິການຜ່ານເຄື່ອງພີໂອເອສ ຈະຊຳລະດ້ວຍສະກຸນເງິນກີບ ຫຼື ເງິນຕາຕ່າງປະເທດກໍ່ຕາມ ໂດຍເລີ່ມຈັດຕັ້ງປະຕິບັດນັບແຕ່ວັນທີ 01 ມັງກອນ 2020 ເປັນຕົ້ນໄປ;
2. ເພື່ອຫຼຸດຜ່ອນການນຳໃຊ້ເງິນສົດ, ຮ້ານຄ້າທີ່ຮັບຊຳລະຄ່າສິນຄ້າ ແລະ ຄ່າບໍລິການຜ່ານເຄື່ອງພີໂອເອສ ຕ້ອງບໍ່ຄິດໄລ່ຄ່າທຳນຽມເພີ່ມຈາກການຮັບບັດເພື່ອຊຳລະຄ່າສິນຄ້າ ແລະ ຄ່າບໍລິການກັບລູກຄ້າ ຫຼື ມວນຊົນທົ່ວໄປທີ່ໃຊ້ບັດຊຳລະຄ່າສິນຄ້າ ແລະ ຄ່າບໍລິການຜ່ານເຄື່ອງພີໂອເອສ;
3. ຖ້າທ່ານໃດພົບເຫັນການລະເມີດແຈ້ງການສະບັບນີ້, ກະລຸນາແຈ້ງມາທີ່ ທະນາຄານແຫ່ງ ສປປ ລາວ ໂທ: 021 253596 ໃນໂມງລັດຖະການ ເພື່ອດຳເນີນມາດຕະການຂັ້ນຕໍ່ໄປຕາມລະບຽບກົດໝາຍທີ່ກຳນົດໄວ້.



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ຮ້ານຄ້າທີ່ຮັບຊໍາລະຄ່າສິນຄ້າ ແລະ ຄ່າບໍລິການຜ່ານເຄື່ອງພີໂອເອສ ແລະ ມອບຊິນທົ່ວໄປທີ່ໃຊ້ບັດຊໍາລະໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ຫົວໜ້າກົມ

ສຸລິສັກ ທໍາມະວົງ